# ແຜນງານຂອງ ຄະນະກຳມາທິການແມ່ນ້ຳຂອງ (ຄມຂ) ເພື່ອການພັດທະນາແບບຍືນຍົງ

ຄະນະກຳມາທິການແມ່ນ້ຳຂອງ ສ້າງຕັ້ງຂຶ້ນໃນປີ 1995 ດ້ວຍການລົງນາມໃນຂໍ້ຕົກລົງ ວ່າດ້ວຍການຮ່ວມມື ແລະ ການພັດທະນາແບບຍືນຍົງ ໃນອ່າງແມ່ນ້ຳຂອງ ໂດຍບັນດາປະເທດພາຄີ: ກຳປູເຈັຽ, ສປປ ລາວ, ໄທ ແລະ ຫວຽດນາມ. ຂໍ້ຕົກລົງການຮ່ວມມື ລະຫວ່າງບັນດາປະເທດຕ່າງໆ ແມ່ນໄດ້ເລີ່ມ ໃນປີ 1975 ໃນເວລາໄດ້ສ້າງຕັ້ງ ຄະນະຄະນະກຳມະການແມ່ນ້ຳຂອງຄັ້ງທຳອິດ. ພາລະບົດບາດໃນເວລານັ້ນ ແມ່ນເນັ້ນໃສ່ການຂຸດຄົ້ນທ່າແຮງການພັດທະນາໄຟຟ້ານ້ຳຕົກ ແລະ ການເດີນເຮືອ ໃນອ່າງນ້ຳ.

ວິໃສທັດຄະນະກຳມາທິການແມ່ນ້ຳຂອງ ໄດ້ປັບປຸງຄືນໃຫມ່ ຄື "ມີຄວາມສົມບູນພູນສຸກດ້ານເສດຖະກິດ, ມີຄວ່ມຍຸດຕິທຳທາງສັງຄົມ ແລະ ປົກປັກຮັກສາສິ່ງແວດລ້ອມ ໃນອ່າງແມ່ນ້ຳຂອງ" ວິໃສທັດ ແລະ ພາລະຫນ້າທີ່ ຂອງ ຄກມ ແມ່ນເຮັດຕາມທິດທາງຕ່າງໆ ສຳລັບສັດຕະວັດທີ 21, ຫນຶ່ງໃນນັ້ນ ແມ່ນພະຍາຍາມພັດທະນາເສດຖະກິດ ໄປພ້ອມກັບຄວາມຍຸດຕິທຳໃນສັງຄົມ ແລະ ການປົກປັກຮັກສາສິ່ງແວດລ້ອມ.

## ແຜນງານຂອງ ຄະນະກຳມາທິການແມ່ນ້ຳຂອງ (ຄມຂ) ເພື່ອການພັດທະນາແບບຍືນຍົງ

ເພື່ອຈັດຕັ້ງປະຕິບັດແຜນຍຸດທະສາດ, ຄມຂ ໄດ້ປ່ຽນຈາກການຮູບການໂຄງການ ເປັນຮູບການແຜນງານ ແລະ ຈາກຂະແຫນງການດຽວ ເປັນຫລາຍຂະແຫນງການ ໂດຍມີຫລາຍຫນ້າທີ່ ໃນລັກສະນະ ຂອງ ໂຄງຮ່າງ ການຈັດຕັ້ງ ເພື່ອສາມາດເຮັດໃຫ້ອົງການຈັດຕັ້ງ ຕອບສະ ຫນອງການພັດທະນາ ແລະ ການຄຸ້ມຄອງ ລະບົບນິເວດວິທະຍາ ໃນອ່າງຮັບນ້ຳອັນກວ້າງໃຫຍ່ ແລະ ສະຫລັບ ຊັບຊ້ອນ ຢ່າງມີປະສິດທິຜົນຫລາຍຂຶ້ນ.

### ຈຸດປະສົງ ຂອງ ຄມຂ

ອ່າງແມ່ນ້ຳຂອງ ແລະ ສິ່ງແວດລ້ອມ ແລະ ຊັບພະຍາກອນທຳມະຊາດ ທີ່ກ່ຽວຂ້ອງ ແມ່ນເປັນຊັບສົມບັດຂອງທຳມະຊາດ ທີ່ມີຄຸນຄ່າມະຫາສານ ຕໍ່ບນດາປະເທດອ່າງແມ່ນ້ຳຂອງ ໃນດ້າເສດຖະກິດ ແລະ ມາດຕະຖານການດຳລົງຊີວິດ ແລະ ການຢູ່ດີກິນດີ ຂອງສັງຄົມ ແລະ ປະຊາຊົນ.

### ພາລະບົດບາດ ຂອງ ຄມຂ

ແມ່ນເປັນການຢັ້ງຢືນຈຸດໝາຍສືບຕໍ່ຮ່ວມມື ແລະ ສົ່ງເສີມໃນລັກສະນະສ້າງສັນ ແລະ ມີຜົນປະໂຫຍດຮ່ວມມື ໃນການພັດທະນາແບບຍືນຍົງ, ການນຳໃຊ້,ການຄຸ້ມຄອງ ແລະ ການປົກປັກຮັກສານ້ຳ ແລະ ຊັບພະຍາກອນທີ່ກ່ຽວຂ້ອງ ສຳລັບການເດີນເຮືອ ແລະ ຈຸດປະສົງ ທີ່ບໍ່ແມ່ນການເດີນເຮືອ, ການພັກພ່ອນ, ການທ່ອງທ່ຽວ ແລະ ການພັດທະນາ ເສດຖະກິດ ແລະ ສັງຄົມ ແລະ ການຢູ່ດີກິນດີ ຂອງ ບັນດາປະເທດອ່າງແມ່ນ້ຳຂອງ ທີ່ປະກອບດ້ວຍໃນການຈຳເປັນ ໃນການປ້ອງກັນ, ປົກປັກຮັກສາ, ປັບປຸງ ແລະ ການຄຸ້ມຄອງສິ່ງແວດລ້ອມ ແລະ ເງື່ອນໄຂທາງນ້ຳ ແລະບຳລຸງຮັກສາຄວາມສົມດູນ ທາງດ້ານນິເວດວິທະຍາເປັນພິເສດຕໍ່ອ່າງຮັບນ້ຳ.

### ພາລະໜ້າທີ່ ຂອງ ຄມຂ

ເພື່ອສົ່ງເສີມ ການປະສານງານ ການຄຸ້ມຄອງແບບຍືນຍົງ ແລະ ການພັດທະນານ້ຳ ແລະ ຊັບພະຍາກອນທີ່ກ່ຽວຂ້ອງ ສຳລັບປະເທດຕ່າງໆ ຢ່າງມີຜົນປະໂຫຍດຮ່ວມກັນ ແລະ ການຢູ່ດີກິນດີ ຂອງປະຊາຊົນໂດຍການຈັດຕັ້ງ ປະຕິບັດ ແຜນງານຍຸດທະສາດ ແລະ ກິດຈະກຳຕ່າງໆ ແລະ ສະໜອງຂ່າວສານ ທາງວິທະຍາສາດ ແລະ ຄຳແນະນຳທາງດ້ານນະໂຍບາຍ

ເຖິງແມ່ນວ່າ ແຜນງານຂອງຂະແໜງການ ຍັງມີບົດບາດສຳຄັນຢູ່ກໍຕາມ, ຄມຂ ມີເຈຕະນາ ກ້າວໄປສູ່ບົດບາດ ການຄຸ້ມຄອງ ແລະ ການຕິດຕາມກວດກາ ໃນອ່າງປມ່ນ້ຳຂອງ.

ໂດຍມີເປົ້າໝາຍ ດັ່ງກ່າວຂ້າງເທິງ, ຄະນະກຳມາທິການແມ່ນ້ຳຂອງ ໄດ້ສ້າງຕັ້ງແຜນງານປະເພດຕ່າງໆ ດັ່ງລຸ່ມນີ້:

- ແຜນງານຫລັກ (core programs)
  - ແຜນພັດທະນາອ່າງ
  - ແຜນງານນຳໃຊ້ນ້ຳ
  - ແຜນງານສິ່ງແວດລ້ອມ
- ແຜນງານຂະແໜງການ (sector programs)
  - ການປະມົງ
  - ກະສິກຳ, ຊົນລະປະທານແລະປ່າໄມ້
  - ການເດີນເຮືອ
  - ການທ່ອງທ່ຽວ
  - ການພັດທະນາຊັບພະຍາກອນມະນຸດ

## *ແຜນພັດທະນາອ່າງ (Basin Development Plan)*

ເປົ້າໝາຍ ຂອງແຜນພັດທະນາອ່າງ ແມ່ນເພື່ອ:

- ການວາງແຜນ ດ້ານການຈັດຕັ້ງ ເພື່ອຮັບຜິດຊອບ ການຄຸ້ມຄອງ ດ້ານການພັດທະນາແບບຍືນຍົງ ຂອງຊັບພະຍາກອນໃນອ່າງແມ່ນ້ຳຂອງ
- ຄວາມສົມດູນ ການພັດທະນາເສດຖະກິດ - ສັງຄົມ ແລະ ສິ່ງແວດລ້ອມ
- ສ້າງຂອບເຂດຂອງການພັດທະນາ ໂດຍອີງໃສ່ຄວາມຮູ້ ດ້ານວິຊາການ ຈາກພາກສ່ວນກ່ຽວຂ້ອງ
- ສົ່ງເສີມການຮ່ວມມືລະຫວ່າງພາກສ່ວນຕ່າງໆ

## *ແຜນງານນຳໃຊ້ນ້ຳ (Water Utilization Program)*

ເປົ້າໝາຍແຜນງານນຳໃຊ້ນ້ຳ ແມ່ນເພື່ອ:

- ສົ່ງເສີມການຄຸ້ມຄອງແບບຍືນຍົງຂອງຊັບພະຍາກອນນ້ຳໃນອ່າງແມ່ນ້ຳຂອງຕອນລຸ່ມ
- ຮັບປະກັນ ຜົນປະໂຫຍດຮ່ວມກັນ ໃນການນຳໃຊ້ນ້ຳ
- ຮັກສາຄວາມສົມດູນຂອງນິເວດວິທະຍາ
- ພັດທະນາພື້ນຖານຄວາມຮູ້ແບບປະສົມປະສານ ແລະ ຕົວແບບອຸທົກກະສາດ
- ສ້າງລະບຽບການ ຄຸ້ມຄອງນຳໃຊ້ນ້ຳ ໃນອ່າງແມ່ນ້ຳຂອງ
- ປັບປຸງຄວາມອາດສາມາດ ດ້ານການຈັດຕັ້ງຂອງຄະນະກຳມາທິການແມ່ນ້ຳຂອງ ແລະ ຄະນະກຳມະການແມ່ນ້ຳຂອງແຫ່ງຊາດ

## *ແຜນງານສິ່ງແວດລ້ອມ (Environment Program)*

ສຳລັບແຜນງານສິ່ງແວດລ້ອມແມ່ນເລັ່ງໃສ່ຄືນ ໂດຍມີເປົ້າໝາຍຄື:

- ສົມດູນ ການພັດທະນາ ເສດຖະກິດ ພ້ອມກັບການປົກປັກຮັກສາ ສິ່ງແວດລ້ອມ ເພື່ອປະຊາຊົນໃນອ່າງແມ່ນ້ຳຂອງ
- ສ້າງຕັ້ງລະບົບເພື່ອ:
  – ຕິດຕາມຄຸນນະພາບສິ່ງແວດລ້ອມໃນອ່າງແມ່ນ້ຳຂອງ
  – ປັບປຸງນະໂຍບາຍ ແລະ ລະບຽບການສິ່ງແວດລ້ອມ
  – ປັບປຸງການຮ່ວມມືໃນປະເທດພາຄີ

– ເພີ່ມຈິດສຳນຶກສິ່ງແວດລ້ອມໃຫ້ມວນ ຊົນ

ແຜນງານສິ່ງແວດລ້ອມໄດ້ກຳນົດຈຸດປະ ສົງຕ່າງໆ ໃນການກຳນົດທັງໝົດ. ຈຸດປະສົງລະ ອຽດຂອງແຜນງານສິ່ງແວດລ້ອມແມ່ນ:

1. ປັບປຸງຄວາມສາມາດ ເພື່ອການຕິດຕາມ ກວດກາ ແລະ ການຕີລາຄາສິ່ງແວດລ້ອມ ຂອງອ່າງແມ່ນ້ຳຂອງ, ສ້າງນະໂຍບາຍ ແລະ ການຄຸ້ມຄອງທີ່ດີ ເພື່ອການພັດທະນາ ແບບຍືນຍົງ
2. ເພີ່ມຄວາມຮູ້ກ່ຽວກັບ ບັນຫາສິ່ງແວດລ້ອມ ໃນອ່າງແມ່ນ້ຳຂອງ, ຊ່ວຍສ້າງນະໂຍບາຍ ລັດຖະບານ, ໂດຍເລັ່ງໃສ່ການພົວພັນ ລະ ຫວ່າງຄົນ, ການພັດທະນາ ແລະ ສິ່ງແວດ ລ້ອມ
3. ພັດທະນາລະບົບໃຫ້ດີ ເພື່ອການສື່ສານ ແລະ ການແລກປ່ຽນ ຂ່າວສານສິ່ງແວດ ລ້ອມ, ແລກປ່ຽນຂ່າວສານ ລະດັບພາກພື້ນ ເພື່ອຜົນປະໂຫຍດສູງສຸດ
4. ປັບປຸງລະບຽບການ ແລະນະໂຍບາຍສິ່ງ ແວດລ້ອມທີ່ກ່ຽວຂ້ອງກັບນ້ຳ ແລະ ຊັບພະ ຍາກອນທີ່ກ່ຽວຂ້ອງ, ເຊິ່ງພິຈາລະນາເອົາ ບົດບາດຍິງ-ຊາຍ, ຊົນເຜົ່າ ແລະ ເສດຖະ ກິດ-ສັງຄົມ, ອຳນວຍຄວາມສະດວກ ໃນ ການສ້າງນະໂຍບາຍ ຂອງລະບຽບການ ແລະ ຂໍ້ແນະນຳຕ່າງໆ ພ້ອມທັງຮັບປະກັນ ຄວາມສອດຄ່ອງກັບບູລິມະສິດ ຂອງຊາດ, ສ້າງຍຸດທະສາດ ການຕີລາຄາສິ່ງແວດລ້ອມ ແລະ ຂະບວນການຕີລາຄາ ຜົນກະທົບ ສິ່ງ ແວດລ້ອມ ແລະ ຂະບວນການຕີລາຄາຜົນ ກະທົບສິ່ງແວດລ້ອມລະດັບພາກພື້ນ.
5. ປັບປຸງຈິດສຳນຶກ ແລະ ຄວາມສາມາດ ເພື່ອເອົາໃຈໃສ່ ບັນຫາສິ່ງແວດລ້ອມ, ເຮັດ ໃຫ້ພະນັກງານ ມີຄວາມເຂົ້າໃຈຕໍ່ບັນຫາ ອ່າງຮັບນ້ຳ ໃນລະດັບກ້ວາງຂວາງ ແລະ ມີ ຄວາມສາມາດ ໃນການຈັດຕັ້ງປະຕິບັດ ກິດ ຈະກຳທີ່ຈຳເປັນ.
6. ປັບປຸງການປະສານງານ ໃນການພັດທະນາ ໃນອ່າງຮັບນ້ຳ, ຄະນະກຳມາທິການ ແມ່ນ້ຳ ຂອງ ຈະສະໜອງການເຂົ້າສູ່ຂ່າວສານ ແລະ ກອງປະຊຸມເພື່ອປຶກສາຫາລື ລະ ຫວ່າງອົງການໃຫ້ທຶນຕ່າງໆ ເພື່ອຈັດຕັ້ງປະ ຕິບັດເພື່ອປັບປຸງໃນການປະສານງານ ໃນ ການພັດທະນາ ເຊິ່ງມີທ່າແຮງທາງດ້ານຜົນ ກະທົບສິ່ງແວດລ້ອມຕ່າງໆ.

### *ແຜນງານການປະມົງ (Fisheries Program)*

ເປົ້າໝາຍ ຂອງ ແຜນງານການປະມົງ ແມ່ນເພື່ອ:

- ບັນລຸທ່າແຮງເສຖະກິດ ແລະ ທ່າແຮງ0v' ອາຫານ ຈາກການປະມົງ ໃນອ່າງແມ່ນ້ຳ ຂອງ
- ສົ່ງເສີມຄວາມຮັບຜິດຊອບ ໃນການຄຸ້ມຄອງ ລະບົບນິເວດວິທະຍາທາງນ້ຳ
- ສ້າງລະບົບຄຸ້ມຄອງການຈັບປາຢ່າງຍືນຍົງ
- ເຮັດໃຫ້ຜົນຜະລິດຈາກປາມີຫຼາຍ ແລະ ມີ ຫຼາຍຮູບແບບ ຜ່ານເຕັກນິກການລ້ຽງສັດນ້ຳ ແລະ ການປະມົງໃນອ່າງຮັບນ້ຳ

### *ແຜນງານກະສິກຳ, ຊົນລະປະທານ ແລະ ປ່າໄມ້ (Agriculture, Irrigation & Forestry Program)*

ເປົ້າໝາຍ ຂອງແຜນງານ ດັ່ງກ່າວ ແມ່ນເພື່ອ:

- ສົ່ງເສີມການຄຸ້ມຄອງ ຊັບພະຍາກອນນ້ຳ ແລະ ດິນ ແລະ ປ່າ ໃຫ້ມີຄວາມຍືນຍົງ
- ເຮັດໃຫ້ຊັບພະຍາກອນ ເປັນທ່າແຮງທາງ ດ້ານເສດຖະກິດສູງສຸດ
- ເຮັດໃຫ້ລະບົບຊົນລະປະທານທັນສະໄໝ

- ວາງແຜນວຽກງານກະສິກຳ-ປ່າໄມ້ ໃນເຂດຂ້າມຜັນຊາຍແດນ ແລະ ແຫຼ່ງນ້ຳທີ່ບອບບາງ

### *ແຜນງານອຸທົກະສາດ ແລະ ຊັບພະຍາກອນນ້ຳ (Hydrology and Water Resources Program)*

ເປົ້າໝາຍຂອງແຜນງານດັ່ງກ່າວແມ່ນ:

- ການນຳໃຊ້ ຊັບພະຍາກອນນ້ຳໃຫ້ຍືນຍົງ
- ເອົາໃຈໃສ່ປ້ອງກັນການຄຸ້ມຄອງ ຄວບຄຸມໄພນ້ຳຖ້ວມ ແລະ ພະລັງນ້ຳ

### *ແຜນງານການທ່ອງທ່ຽວ (Tourism Program)*

ເປົ້າໝາຍ ຂອງແຜນງານການທ່ອງທ່ຽວແມ່ນພັດທະນາທ່ອງທ່ຽວ ພ້ອມທັງ ປົກປັກຮັກສາສິ່ງແວດລ້ອມ

### *ແຜນງານການເດີນເຮືອ (Navigation Program)*

ເປົ້າໝາຍຂອງແຜນງານການເດີນເຮືອແມ່ນ:

- ສ້າງເງື່ອນໄຂ ການມີວຽກເຮັດງານທຳ ການຄ້າ ແລະ ລາຍຮັບ ໂດຍການພັດທະນາການຄ້າສາກົນ ຜ່ານການເດີນເຮືອ.
- ຊ່ວຍຫລຸດຜ່ອນຄວາມທຸກຍາກ ໂດຍຜ່ານການປັບປຸງການເຂົ້າຫາເຂດຫ່າງໄກສອກຫລີກ
- ສົ່ງເສີມການເດີນເຮືອແບບເສລີ
- ສ້າງຂອບເຂດຫລັກການເພື່ອຄວາມປອດໄພ, ການປະສານງານ ແລະ ການຂົນສົ່ງທາງນ້ຳຢ່າງມີປະສິດທິພາບ
- ດຳເນີນວຽກງານ ຕາມແມ່ນ້ຳ ເພື່ອທຳລາຍສິ່ງກີດຂວາງ ເພື່ອການເດີນເຮືອ

### *ແຜນງານພັດທະນາ ຊັບພະຍາກອນມະນຸດ (Human Resources Development Program)*

ເປົ້າໝາຍ ຂອງແຜນງານພັດທະນາຊັບພະຍາກອນມະນຸດແມ່ນເພື່ອ:

- ພັດທະນາຄວາມຊຳນານງານ ຢ່າງເໝາະສົມ ແລະ ຄວາມສາມາດ ເພື່ອປະຕິບັດແຜນຍຸດທະສາດ
- ເລັ່ງໃສ່ການຄຸ້ມຄອງຊັບພະຍາກອນນ້ຳ ລະດັບອ່າງ
- ສ້າງຄວາມເຂັ້ມແຂງ ໃຫ້ການປົກຄອງ, ການເປັນຜູ້ນຳ, ການເຮັດວຽກໃນໜ່ວຍງານ ແລະ ການຈັດຕັ້ງ ຕໍ່ວັດທະນາທຳທຸກໆລະດັບ ໃນຄວາມເຂັ້ມແຂງ ໃຫ້ການປົກຄອງ, ຄະນະກຳມາທິການແມ່ນ້ຳຂອງແຫ່ງຊາດ ແລະ ອົງການຈັດຕັ້ງລັດຖະບານ ຂອງປະເທດພາຄີ ແມ່ນ້ຳຂອງທີ່ກ່ຽວຂ້ອງ.
    - ເບິ່ງບັນບັນຫາແມ່ຍິງທີ່ກ່ຽວຂ້ອງ

## ພາບລວມຂອງແຜນງານຄະນະກຳມາທິການແມ່ນ້ຳຂອງ

ສາມາດເຫັນໄດ້ຈາກຈຸດປະສົງຂອງແຜນງານຕ່າງໆ ເຊິ່ງຄະນະກຳມາທິການແມ່ນ້ຳຂອງ ເລັ່ງໃສ່ໃນປະຈຸບັນ ກ່ຽວກັບ ລັກສະນະ ແລະ ວິທີການໃນການພັດທະນາແບບຍືນຍົງ ໃນລະດັບອ່າງຮັບນ້ຳໃນການນຳພາ, ການຄຸ້ມຄອງຊັບພະຍາກອນ ແຫຼ່ງນ້ຳ, ສິ່ງແວດລ້ອມ, ປ່າໄມ້, ການປະມົງ, ການກະສິກຳ, ການເດີນເຮືອ, ການເດີນທາງ ແລະ ການພັດທະນາຊັບພະຍາກອນມະນຸດ. ຄົນແມ່ນເປັນຫລັກການ ທີ່ຕ້ອງເລັ່ງໃສ່ ແລະ ຄວາມສະເໝີພາບໃນບົດບາດຍິງ-ຊາຍ ແລະ ຄວາມທຸກຈົນ ແມ່ນເປັນຈຸດເປົ້າໝາຍ ຊຶ່ງເປັນບັນຫາທີ່ຈະຕ້ອງແກ້ໄຂ. ໃນບົດຮຽນຜ່ານມາ ຂອງ ແຕ່ລະວິທີການ ແຕ່ລະຂົງເຂດ ໄດ້ສະແດງໃຫ້ເຫັນຄວາມຈຳເປັນ ຕໍ່ບັນຫາ ການພັດທະນາແບບຍືນຍົງ.

ຄະນະກຳມາທິການ ແມ່ນ້ຳຂອງ ແມ່ນຢູ່ໃນຕຳແໜ່ງກະຕຸ້ນ ແລະ ຜູ້ນຳ ໃນການເດີນທາງ ຂອງປະເທດພາຄີ ແລະ ເຮັດໃຫ້ປະຊາຊົນມີເສຖະກິດຢ່າງໝັ້ນຄົງ, ສັງຄົມຍຸດຕິທຳ ແລະ ສິ່ງແວດລ້ອມດີ ໃນອ່າງແມ່ນ້ຳຂອງ.

## ສະຫລຸບຈຸດສຳຄັນຕ່າງໆ

- ຄະນະກຳມາທິການ ແມ່ນ້ຳຂອງໄດ້ກຳນົດ ພາລະບົດບາດ ຂອງຕົນເອງ ຄື ສົ່ງເສີມການພັດທະນາແບບຍືນຍົງໃນອ່າງແມ່ນ້ຳຂອງໂດຍຜ່ານມາການບັນລຸຈຸດປະສົງຂອງແຜນງານຫລັກ ແລະ ຂະແໜງການ.
- ແຜນງານຕ່າງໆ ເນັ້ນໃສ່ ການພັດທະນາຄົນໂດຍ ຜ່ານການວາງແຜນການຮ່ວມມື ວຽກງານອ່າງນ້ຳ, ມີຈິດສຳນຶກດ້ານສິ່ງແວດລ້ອມ ແລະ ຮັບຮູ້ເຖິງການອາໃສ ເພິ່ງພາຊຶ່ງກັນແລະກັນ ຂອງທຸກໆຂະແໜງການທັງໝົດ ໃນອ່າງແມ່ນ້ຳຂອງ.
  - ເປົ້າໝາຍແມ່ນ ເພື່ອເຮັດໃຫ້ມີຄວາມສົມດູນທາງດ້ານ ເສດຖະກິດ-ສັງຄົມ ແລະ ສິ່ງແວດລ້ອມ ແລະ ບັນລຸຜົນປະໂຫຍດ ຮ່ວມກັນ ສຳລັບບັນດາ ປະເທດພາຄີ.